ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມາທິການແຫ່ງຊາດ
ເພື່ອຄວາມກ້າວໜ້າຂອງແມ່ຍິງ , ແມ່ ແລະ ເດັກ

ເລກທີ 246 /ຄຊກມດ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2023

# ມະຕິ

## ກອງປະຊຸມຄົບຄະນະເປີດກວ້າງ

## ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ປະຈຳປີ 2023

ກອງປະຊຸມຄົບຄະນະເປີດກວ້າງ ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ປະຈຳປີ 2023 ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 22 ພະຈິກ 2023 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ. ກອງປະຊຸມຄັ້ງນີ້ໄດ້ຮັບກຽດເຂົ້າຮ່ວມ ແລະ ເປັນປະທານ ໂດຍທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ. ກອງປະຊຸມຄັ້ງນີ້ ມີບັນດາຮອງປະທານ ແລະ ກຳມະການໃນ ຄຊກມດ, ທັງເປັນປະທານ ຄກມດ ກະຊວງ ແລະ ອົງການທຽບເທົ່າກະຊວງ; ບັນດາທ່ານຮອງເຈົ້າແຂວງ ທີ່ເປັນປະທານ ຄກມດ ແຂວງ ແລະ ນະຄອນຫຼວງ, ບັນດາເສນາທິການຊ່ວຍວຽກ ຄຊກມດ ແລະ ຄກມດ ຂັ້ນສູນກາງ ແລະ ທ້ອງຖິ່ນ ເຂົ້າຮ່ວມທັງ ໝົດ 71 ທ່ານ ຍິງ 32 ທ່ານ ແລະ ເຂົ້າຮ່ວມຜ່ານຮູບແບບທາງໄກ (ອອນລາຍ) ຈຳນວນ 72 ບັນຊີ.

ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ເປັນເຈົ້າການ ແລະ ເອົາໃຈໃສ່ຕິດຕາມຮັບຟັງການສະຫຼຸບລາຍງານກາງສະໄໝ (2021-2023) ແລະ ທິດທາງແຜນການເຄື່ອນໄຫວຈັດຕັ້ງປະຕິບັດທ້າຍສະໄໝ (2024-2025) ຂອງການຈັດຕັ້ງປະຕິບັດແຜນການ 5 ປີ ໃນການສົ່ງເສີມຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ ແລະ ບົດສະຫລຸບຜົນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມຄົບຄະນະເປີດກວ້າງ ຄຊກມດ ປະຈຳປີ 2022; ກອງປະຊຸມໄດ້ປະກອບຄຳເຫັນຢ່າງພາວະວິໄສ ແລະ ກົງໄປກົງມາ ແລະ ເອກະພາບຕໍ່ທັງສອງຮ່າງບົດສະຫລຸບ, ເຫັນດີເອກະພາບຕໍ່ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍທີ່ພາໃຫ້ບໍ່ສາມາດບັນລຸຜົນສຳເລັດ ໃນບາງຄາດໝາຍວາງອອກ, ພ້ອມນັ້ນ ກໍໄດ້ກຳນົດທິດທາງແຜນການກໍຄືແຜນວຽກຈຸດສຸມໃນຕໍ່ໜ້າ ດັ່ງນີ້:

1. ກອງປະຊຸມໄດ້ຄົ້ນຄວ້າປຶກສາຢ່າງເລິກເຊິ່ງຢ່າງກົງໄປກົງມາ ແລະ ຮັບຮອງເອົາບົດສະຫຼຸບກາງສະໄໝ (2021-2023) ຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝທ້າຍປີ 2025 ແລະ ແຜນວຽກຈຸດສຸມສຳລັບປີ 2024 ຂອງ ຄຊກມດ.
2. ເຫັນດີເປັນເອກະພາບກ່ຽວກັບນິຕິກຳການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຊກມດ, ຄກມດ ແລະ ເສນາທິການຊ່ວຍວຽກປັບປຸງແທນສະບັບເກົ່າ ເພື່ອເປັນບ່ອນອີງໃຫ້ແຕ່ລະຂັ້ນປັບປຸງການຈັດຕັ້ງໃນການເຄື່ອນໄຫວວຽກງານຂອງຕົນໃຫ້ສຳເລັດ.
3. ກອງປະຊຸມໄດ້ຄົ້ນຄ້ວາເຫັນດີເປັນເອກະພາບ ແລະ ຮັບຮອງເອົາຜົນຂອງການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມຄົບຄະນະເປີດກ້ວາງ ຄຊກມດ ປີ 2022.

4. ໃຫ້ບັນດາ ຄກມດ ບັນດາຂະແໜງການ ແລະ ທ້ອງຖິ່ນ ເປັນເຈົ້າການຊີ້ນຳຄະນະ ຄກມດ ຂັ້ນຂອງຕົນ; ເຊື່ອມສານວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ວຽກງານອື່ນໆ ພ້ອມທັງຊຸກຍູ້ຕິດຕາມກວດກາ ແລະ ສະຫຼຸບລາຍງານ ຄຊກມດ ເປັນປົກກະຕິ.

5. ຄຊກມດ; ຄກມດ ບັນດາຂະແໜງການ ແລະ ທ້ອງຖິ່ນ ເປັນເຈົ້າການຊີ້ນຳສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ; ແຜນດຳເນີນງານແຫ່ງຊາດ ເພື່ອແມ່ ແລະ ເດັກ; ແຜນດຳເນີນງານແຫ່ງຊາດເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກໃຫ້ສຳເລັດ; ພ້ອມດຽວກັນນີ້ໃຫ້ສະຫຼຸບລາຍງານທຸກ 3 ເດືອນ 6 ເດືອນ ແລະ 1 ປີ; ມອບໃຫ້ ຫ້ອງການ ຄຊກມດ ກຳນົດລະອຽດກ່ຽວກັບວິທີການ, ເຄື່ອງມື ແລະ ກຳນົດເວລາໃນການລາຍງານ ແລ້ວແຈ້ງໃຫ້ ຄກມດ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

6. ມອບໃຫ້ ຫ້ອງການ ຄຊກມດ ປະສານສົມທົບກັບ ຄກມດ ຂະແໜງການທີ່ກ່ຽວຂ້ອງ ເພື່ອປຶກສາຫາລືກະກຽມຕອບຄຳຖາມເຈາະຈົ້ມຂອງຄະນະກຳມາທິການຊີດໍສາກົນຕໍ່ບົດລາຍແຫ່ງຊາດປະຈຳໄລຍະທີ 10 ໃນການຈັດຕັ້ງປະຕິບັດສົນທິສັນຍາຊີດໍໃນ ສປປ ລາວ; ກະກຽມຄວາມພ້ອມທາງດ້ານເນື້ອໃນ ເພື່ອເຂົ້າຮ່ວມກອງປະຊຸມປ້ອງກັນບົດລາຍງານໃນປີ 2024.

7. ມອບໃຫ້ ຄຊກມດ ສົມທົບກັບກະຊວງການຕ່າງປະເທດ ປັບປຸງບົດລາຍງານແຫ່ງຊາດປະຈຳໄລຍະທີ 7 ໃຫ້ສຳເລັດ ແລະ ສົ່ງບົດລາຍງານດັ່ງກ່າວໃຫ້ ຄະນະກຳມະການ ສິດທິເດັກ, ສປຊ ໃຫ້ສຳເລັດໃນ ທ້າຍປີ 2023.

8. ກະກຽມຄວາມພ້ອມທາງດ້ານເນື້ອໃນ ແລະ ຂະບວນການຕ່າງໆ ໃນການຈັດເວທີເດັກອາຊຽນ ຄັ້ງທີ VIII ແລະປະກອບສ່ວນທາງດ້ານເນື້ອໃນ ທີ່ລາວຈະເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ປີ 2024.

9. ມອບໃຫ້ ຄກມດ ກະຊວງ, ອົງການ ແລະ ແຂວງ ສືບຕໍ່ສ້າງຂະບວນການ, ໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ; ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກ, ສົນທິສັນຍາວ່າດ້ວຍການລົບລ້າງທຸກການຈຳແນກຕໍ່ແມ່ຍິງ ແລະ ສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສອງອານຸສັນຍາເພີ່ມເຕີມວ່າດ້ວຍສິດທິເດັກໃຫ້ກວ້າງຂວາງ ແລະ ເລິກເຊິ່ງກວ່າເກົ່າ.

10. ມອບໃຫ້ ຫ້ອງການ ຄຊກມດ ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ ຄກມດ ແລະ ເສນາທິການຊ່ວຍວຽກແຕ່ລະຂັ້ນໃນການຈັດຕັ້ງປະຕິບັດວຽກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຕາມພາລະບົດບາດ ແລະ ໜ້າທີ່ຕົນ.

11. ມອບໃຫ້ ຄກມດ ແຕ່ລະກະຊວງ-ອົງການ ແຂວງ ແລະ ນະຄອນຫຼວງ ນຳເອົາມະຕິຂອງກອງປະຊຸມນີ້ໄປເຜີຍແຜ່ ແລະ ຈັດຕັ້ງປະຕິບັດໃຫ້ບັນລຸຜົນສຳເລັດ ແລະ ສະຫຼຸບລາຍງານ ເປັນປົກກະຕິ.

ປະທານກອງປະຊຸມ

ຮອງນາຍົກລັດຖະມົນຕີ, ປະທານ ຄຊກມດ

ປະທານ

ສຈ.ປອ. ກິແກ້ວ ໄຊຄຳພິທູນ